# ການເຂົ້າໃຈຜົນກວດພະຍາດຕັບອັກເສບ B ຂອງທ່ານ*

**ແຜງກວດເລືອດສຳລັບພະຍາດຕັບອັກເສບ B ປະກອບມີການກວດສາມຢ່າງ. ຜົນກວດທັງສາມຕ້ອງເປັນທີ່ຮູ້ຈັກເພື່ອຢືນຢັນສະຖານະຂອງທ່ານ. ຂ້າງລຸ່ມແມ່ນຕາຕະລາງທີ່ມີຄຳອະທິບາຍທີ່ເກີດຂຶ້ນຫຼາຍທີ່ສຸດສຳລັບຜົນກວດ, ແຕ່ຜົນກວດທີ່ບໍ່ເປັນປົກກະຕິກໍສາມາດເກີດຂຶ້ນໄດ້.**

ກະລຸນາຮັບຊາບວ່າ: ຕາຕະລາງນີ້ບໍ່ມີເຈດຕະນາໃຊ້ເພື່ອເປັນຄຳແນະນຳ ທາງການແພດ. ສົນທະນາກັບຜູ້ໃຫ້ບໍລິການດູແລສຸຂະພາບຂອງທ່ານສຳລັບຄຳອະທິບາຍທີ່ຄົບຖ້ວນ ແລະ ຮັບເອົາສຳເນົາຜົນກວດຂອງທ່ານ.

| **HBsAg**<br>ພື້ນຜິວຂອງພະຍາດຕັບອັກເສບ B<br>ການກວດແອນຕິເຈນ | **anti-HBs**<br>(HBsAb)<br>ພື້ນຜິວຂອງພະຍາດຕັບອັກເສບ B<br>ການກວດພູມຕ້ານທານຂອງຮ່າງກາຍ | **anti-HBc**<br>(HBcAb)<br>ສ່ວນໃນຂອງພະຍາດຕັບອັກເສບ B<br>ການກວດພູມຕ້ານທານຂອງຮ່າງກາຍ | **ໝາຍຄວາມຂອງຜົນກວດ** | **ທ່ານຈຳເປັນຕ້ອງເຮັດຫຍັງ** |
|---|---|---|---|---|
| − | − | − | **ທ່ານບໍ່ມີພູມຄຸ້ມກັນ/ບໍ່ໄດ້ຮັບການປ້ອງກັນ**<br>· ທ່ານບໍ່ໄດ້ຕິດເຊື້ອ ແລະ ບໍ່ເຄີຍຕິດເຊື້ອໃນອະດີດ.<br>· ທ່ານມີຄວາມສ່ຽງທີ່ຈະຕິດເຊື້ອພະຍາດຕັບອັກເສບ B. | **ຈຳເປັນຕ້ອງສັກວັກຊີນ** |
| − | + | − | **ທ່ານມີພູມຄຸ້ມກັນ/ໄດ້ຮັບການປ້ອງກັນ**<br>· ທ່ານບໍ່ໄດ້ຕິດເຊື້ອ.<br>· ທ່ານມີພູມຄຸ້ມກັນເນື່ອງຈາກການສັກວັກຊີນປ້ອງກັນພະຍາດຕັບອັກເສບ B. | **ບໍ່ຈຳເປັນຕ້ອງສັກວັກຊີນ** |
| − | + | + | **ທ່ານມີພູມຄຸ້ມກັນເນື່ອງຈາກການຕິດເຊື້ອໂດຍທຳມະຊາດ**<br>· ທ່ານຟື້ນຕົວຈາກການຕິດເຊື້ອພະຍາດຕັບອັກເສບ B ທີ່ເກີດຂຶ້ນກ່ອນໜ້າ.<br>· ທ່ານບໍ່ສາມາດເຮັດໃຫ້ຄົນອື່ນຕິດເຊື້ອໄດ້. | **ບໍ່ຈຳເປັນຕ້ອງສັກວັກຊີນ**<br>· ສົນທະນາກັບທ່ານໝໍຂອງທ່ານກ່ຽວກັບຜົນກວດພະຍາດຕັບອັກເສບ B ຂອງທ່ານ.<br>· ສົນທະນາກັບທ່ານໝໍຂອງທ່ານກ່ອນທີ່ຈະໃຊ້ຢາລະງັບລະບົບພູມຄຸ້ມກັນ ເພາະ ພວກມັນສາມາດເພີ່ມຄວາມສ່ຽງສຳລັບການປຸກລິດພະຍາດຕັບອັກເສບ B ຄືນໃໝ່. |
| + | − | + | **ທ່ານຕິດເຊື້ອ**<br>· ທ່ານມີເຊື້ອໄວຣັດຕັບອັກເສບ B ຢູ່ໃນເລືອດຂອງທ່ານ.<br>· ທ່ານສາມາດແຜ່ເຊື້ອໄວຣັດຕັບອັກເສບ B ໃຫ້ຄົນອື່ນ. | **ທ່ານຈຳເປັນຕ້ອງກວດເພີ່ມ**<br>· ຊອກຫາທ່ານໝໍເພື່ອປະເມີນ ແລະ ກວດເພີ່ມ.<br>· ສົນທະນາກັບທ່ານໝໍຂອງທ່ານກ່ຽວກັບຜົນກວດພະຍາດຕັບອັກເສບ B ຂອງທ່ານ.<br>· ດຳເນີນການໃຫ້ແນ່ໃຈວ່າຄູ່ຮ່ວມອາໄສຂອງທ່ານ ແລະ ຄົນທີ່ກຳລັງອາໄສຢູ່ກັບທ່ານ ໄດ້ຮັບການກວດພະຍາດ ແລະ ສັກວັກຊີນແລ້ວ. |
| − | − | + | **ທ່ານສາມາດຕິດເຊື້ອ**<br>· ຜົນກວດບໍ່ຊັດເຈນ - ອາດມີການຕິດເຊື້ອພະຍາດຕັບອັກເສບ B ໃນອະດີດ ຫຼື ໃນປັດຈຸບັນ. | **ທ່ານຈຳເປັນຕ້ອງກວດເພີ່ມ**<br>· ຊອກຫາທ່ານໝໍເພື່ອປະເມີນ ແລະ ກວດເພີ່ມ.<br>· ສົນທະນາກັບທ່ານໝໍຂອງທ່ານກ່ຽວກັບຜົນກວດພະຍາດຕັບອັກເສບ B ຂອງທ່ານ.<br>· ສົນທະນາກັບທ່ານໝໍຂອງທ່ານກ່ອນທີ່ຈະໃຊ້ຢາ ລະງັບລະບົບພູມຄຸ້ມກັນ ເພາະ ພວກມັນສາມາດເພີ່ມຄວາມສ່ຽງສຳລັບ ການປຸກລິດພະຍາດຕັບອັກເສບ B ຄືນໃໝ່.<br>· ດຳເນີນການໃຫ້ແນ່ໃຈວ່າຄູ່ຮ່ວມອາໄສຂອງທ່ານ ແລະ ຄົນທີ່ກຳລັງອາໄສຢູ່ກັບທ່ານໄດ້ຮັບ ການກວດພະຍາດ ແລະ ສັກວັກຊີນແລ້ວ. |

Hep B Hub
doh.wa.gov/hepbhub

*ຂໍ້ມູນຢູ່ໃນຕາຕະລາງນີ້ ບໍ່ມີຜົນນຳໃຊ້ກັບຄົນທີ່ອາດມີພະຍາດຕັບອັກເສບ B ຂັ້ນຮຸນແຮງ (ຫຼື ຫາກໍຕິດເຊື້ອໃໝ່).

Washington State Department of Health

DOH 420-434 October 2022 Lao
ເພື່ອຂໍເອົາເອກະສານນີ້ໃນຮູບແບບອື່ນ, ໃຫ້ໂທ 1-800-525-0127. ລູກຄ້າທີ່ຫູໜວກ ຫຼື ບໍ່ຄ່ອຍໄດ້ຍິນ, ກະລຸນາໂທ 711 (Washington Relay) ຫຼື ອີເມວຫາ civil.rights@doh.wa.gov. ແຫຼ່ງຂໍ້ມູນ: Hepatitis B Foundation https://www.hepb.org